# <u>ບົດຂ່າວ</u>

## ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ທີ່ບຣຸກແຊນ

## ສະຫຼອງປີໃໝ່ລາວ ພ.ສ 2554

************************

ເນື່ອງໃນວາລະສົ່ງທ້າຍປີເກົ່າ ປີຂານ ພ.ສ. 2553 ແລະ ຕ້ອນຮັບປີໃໝ່ ປີເຖາະ ພ.ສ. 2554 ນີ້, ວັນທີ 16 ເມສາ 2011 ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈໍາບຣຸກແຊນ, ປະເທດແບນຊິກ ໄດ້ເຕົ້າລວມຊາວລາວພີ່ນ້ອງຈັດຕັ້ງສະຫຼອງປີໃໝ່ລາວ ຕາມຮີດຄອງປະເພນີອັນດີງາມຂອງຊາດລາວເຮົາຢ່າງມີຄວາມໝາຍ ແລະ ເຕັມໄປດ້ວຍບັນຍາກາດອັນເບີກບານມ່ວນຊື່ນ. ໃນພິທີດັ່ງກ່າວກໍໄດ້ນິມົນພະສົງສາມອົງຈາກວັດຣັດຕະນະໂຄດ, ບຣຸກແຊນ ທໍາພິທີສູດຕາມພິທີສາດສະໜາ, ພິທີຕັກບາດຫຍາດນໍ້າ, ຫຼັງຈາກນັ້ນກໍໄດ້ສືບຕໍ່ດ້ວຍການຈັດບາສີສູ່ຂັວນອວຍພອນໃຫ້ກັນ ແລະ ກັນ ລະຫວ່າງພີ່ນ້ອງຊາວລາວທີ່ເຂົ້າຮ່ວມ. ຊາວລາວທີ່ເຂົ້າຮ່ວມປະມານ 150 ຄົນ ຈາກປະເທດແບນຊິກ, ຝຣັ່ງ, ເນເທີແລນ ແລະ ເຢຍລະມັນ ໄດ້ສະແດງຄວາມດີໃຈ ແລະ ຮູ້ບຸນຄຸນຕໍ່ການຈັດຕັ້ງສະຖານເອກອັກຄະລັດຖະທູດທີ່ຍາມໃດກໍມີຄວາມເປັນຫ່ວງເປັນໄຍເອົາໃຈໃສ່ຊາວລາວທີ່ຕ່າງປະເທດເຖິງວ່າເຂົາເຈົ້າຈະຢູ່ຫ່າງໄກບ້ານເກີດເມືອງນອນ, ບໍ່ໄດ້ເດີນທາງມາຮ່ວມບຸນປີໃໝ່ຢູ່ປະເທດລາວຄັ້ງນີ້ກໍຕາມ ແຕ່ກໍຮູ້ສຶກພູມໃຈທີ່ໄດ້ມາເຕົ້າລວມພົບພໍ້ກັນທີ່ສະຖານເອກອັກຄະລັດຖະທູດອັນເປັນຈຸດໝາຍລວມແຫ່ງນໍ້າໃຈຄວາມສາມັກຄີ ແລະ ນໍາພາການເຄື່ອນໄຫວ.

ພິທີໄດ້ສໍາເລັດລົງດ້ວຍການຮ່ວມພາເຂົ້າສາມັກຄີ ແລະ ມ່ວນຊື່ນຢ່າງເບີກບານທີ່ສຸດ. ໃນມື້ຕໍ່ມາສະຖານເອກອັກຄະລັດຖະທູດພ້ອມດ້ວຍພະນັກງານກໍໄດ້ເດີນທາງໄປຮ່ວມທໍາບຸນຕັກບາດ, ຕາມຮີດຄອງກັບຊາວລາວ ທີ່ວັດຣັດຄໍາຕະນະໂຄດຕື່ມອີກ ແລະ ໄດ້ມອບເງິນກິນທານຂອງພີ່ນ້ອງຊາວລາວຈໍານວນ 600 ເອີໂຣ ເປັນການປະກອບສ່ວນປົວແປງວັດລາວໃຫ້ຮຸ່ງເຮືອງເຫຼືອເຫຼື້ອມ.

ສະຖານເອກອັກຄະລັດຖະທູດ ແຫ່ງ ສ.ປ.ປ.ລາວ
ບຣຸກແຊນ